ພິທີວາງສີລາລຶກ

ກຸ່ມບໍລິສັດ ທ່ອງທ່ຽວ ແລະ ວັດທະນະທຳລາວ ມະຫາຊົນ ຊຶ່ງໄດ້ປ່ຽນຊື່ຈາກບໍລິສັດ ຊີມັງລາວ ມະຫາຊົນ (ໂຮງງານ ຊີມັງວັງວຽງ ຫຼັງ 2) ໃນເມື່ອກ່ອນໄດ້ສ້າງຕັ້ງຂຶ້ນມານັບຕັ້ງແຕ່ປີ 1998 ຊຶ່ງຂຶ້ນກັບລັດ ວິສາຫະກິດ ພັດທະນາກະສິກຳ ອຸດສາຫະກຳ ແລະບໍລິການຂາອອກ - ຂາເຂົ້າ ແລະຢູ່ໃຕ້ການຊີ້ນຳ ຈາກ ກະຊວງປ້ອງກັນປະເທດ ແລະ ກະຊວງການເງິນ ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນ ຫຼວງວຽງຈັນ ທັງໄດ້ເປັນ ແບບຢ່າງການຮ່ວມມືດ້ານເສດຖະກິດລະຫວ່າງທັງສອງປະເທດລາວ-ຈີນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ລາວ ໃຫ້ຢຸດຕິກິດຈະການ ການຜະລິດ ແລະການຈຳໜ່າຍຊີມັງ ຢ່າງຖາວອນ ແລະໃຫ້ຫັນຮູບແບບທຸລະກິດ ໃໝ່ຄື : ທຸລະກິດການທ່ອງທ່ຽວແບບປະສົມປະສານຕາມລະບຽບການ ແລະກົດໝາຍ. ດັ່ງນັ້ນ, ໃນວັນທີ 12 ມັງກອນ 2024 ຢູ່ທີ່ໂຮງງານ ຊີມັງວັງວຽງ ຫຼັງ 2 ເວລາ 15:00 ໂມງ ເປັນຕົ້ນໄປ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ມີພິທີວາງສີລາລຶກ ຂອງໂຄງການກໍ່ສ້າງເຂດສາທິດອຸດສາຫະກຳການ ທ່ອງ ທ່ຽວ ແລະ ວັດທະນະທຳເມືອງວັງວຽງ, ໂຄງການກໍ່ສ້າງເຂດຮີສອດສາກົນໝອງສີຟ້າດອງຈັນວັງວຽງ (ສູນຝຶກ ອົບຮົມວັງວຽງ ກະຊວງປ້ອງກັນປະເທດ) , ພິທີເຊັນສັນຍາສ້າງຕັ້ງສູນພາບ-ສຽງ ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ແລະພິທີເຊັນສັນຍາຮ່ວມມືຍຸດທະສາດກັບມະຫາວິທະຍາໄລ ວິທະຍາສາດ ນະຄອນຄຸນໝິງ ເຊິ່ງສອງໂຄງ ການດັ່ງກ່າວນີ້ມີເນື້ອທີ່ 111 ເຮັກຕ່າ, ເນື້ອທີ່ການກໍ່ສ້າງປະມານ 6 ແສນ 40 ພັນຕາແມັດ, ໃນນັ້ນໂຄງການ ກໍ່ສ້າງສວນສາທິດມີເນື້ອທີ່ກໍ່ສ້າງປະມານ 5 ແສນ 40 ພັນຕາແມັດ, ສ່ວນໂຄງການກໍ່ສ້າງເຂດຮີສອດສາກົນ ໝອງສີຟ້າດອງຈັນວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ) ມີເນື້ອທີ່ການກໍ່ສ້າງປະມານ 1 ແສນ ຕາແມັດ, ມູນຄ່າການລົງທຶນທັງໝົດ 4 ຕື້ 500 ລ້ານຢວນ, ກຳນົດໄລຍະເວລາກໍ່ສ້າງໃຫ້ສຳເລັດພາຍໃນ 36 ເດືອນ, ສ່ວນວຽກງານການວາງແຜນ ແລະ ອອກແບບໃຫ້ໂຄງການ ໄດ້ມອບໃຫ້ສະຖາບັນອອກແບບທີ່ມີ ຄວາມຊຳນານງານໃນວຽກງານກໍ່ສ້າງໂຮງແຮມ ແລະສະຖານທີ່ທ່ອງທ່ຽວ ຂອງ ສປຈີນ, ມາດຳເນີນການຂຽນ ບົດວິພາກເສດຖະກິດເຕັກນິກ ແລະອອກແບບ-ວາງແຜນໂຄງການກໍ່ສ້າງເປັນເວລາ 10 ເດືອນ, ໃນພິທີ ດັ່ງກ່າວນີ້ເປັນກຽດເຂົ້າຮ່ວມໂດຍ **ທ່ານ ພົນໂທ ທອງລອຍ ສີລິວົງ ຫົວໜ້າກົມໃຫ່ຍການ ເມືອງ ກອງທັບ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ,ທ່ານ ວັນສີ ກົວມົວ ຮອງລັດຖະມົນຕີ ກະຊວງຖະແຫຼ່ງຂ່າວ ວັດທະນະທຳ ແລະທ່ອງທ່ຽວ, ທ່ານ ນ ປອ ສີສຸກ ວົງວິຈິດ ຮອງ ລັດຖະມົນຕີ ກະຊວງສຶກສາທິການ ແລະກິລາ ນອກນັ້ນ**ຍັງມີບັນດາແຂກຈາກຫຼາຍພາກສ່ວນເຂົ້າ ຮ່ວມເຊັ່ນ : ຄະນະຈາກກະຊວງປ້ອງກັນປະເທດ, ກະຊວງການເງິນ, ກະຊວງໂຍທາທິການ ແລະຂົນສົ່ງ, ກະຊວງຖະແຫຼ່ງຂ່າວ ວັດທະນະທຳ ແລະທ່ອງທ່ຽວ , ກະຊວງອຸດສາຫະກຳ ແລະການຄ້າ,ກະຊວງພະລັງງານ ແລະບໍ່ແຮ່, ກະຊວງສຶກສາທິການ ແລະກິລາ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ຕະຫຼາດຫຼັກ ຊັບລາວ, ຮອງເຈົ້າແຂວງ ແຂວງວຽງຈັນ, ເຈົ້າເມືອງເມືອງວັງວຽງ ແລະ ພາກສ່ວນອື່ນໆ.


พิธีวางศิลาฤกษ์
奠基仪式


国防部万荣培训中心
（蓝月湖国际度假区）建设项目
澜湄（老挝）网络视听产业基地
揭牌仪式
พิธีวางศิลาฤกษ์
奠基仪式


ພິທີວາງສິລາລຶກ
奠基仪式
与昆明理工大学、中建工程设计有限公司
战略合作协议签约仪式
万荣旅游经济产业示范园
(中老文化园)建设项目
国防部万荣培训中心
(蓝月湖国际度假区)建设项目
澜湄(老挝)网络视听产业基地
揭牌仪式








万荣旅游经济产业示范园
(中老文化园)建设项目
国防部万荣培训中心
(蓝月湖国际度假区)建设项目


揭牌仪式
LCTC
YNAFS


ພິທີວາງສິລາລຶກ
奠基仪式
与昆明理工大学、中建工程设计有限公司
战略合作协议签约仪式
万荣旅游经济产业示范园
(中老文化园)建设项目
国防部万荣培训中心
(蓝月湖国际度假区)建设项目
揭牌仪式








LCTC

